**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ 263 /ຈຂ.ຊຂ

ຊຽງຂວາງ, ວັນທີ 07/04/ 2017

# ຂໍ້ຕົກລົງ

ວ່າດ້ວຍ: ການແກ້ໄຂ ແລະ ດັດສົມ ໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນິເຈີ່ທົ່ວແຂວງ

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ທີ່ລະບຸໄວ້ໃນ ພາກທີ III ໝວດທີ 4 ມາດຕາ 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອງຫຼວງ.
- ອີງຕາມ: ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້,ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ15/ນຍ,ລົງວັນທີ 13/05/2016.
- ອີງຕາມ: ຄວາມເປັນເອກະພາບໃນຄະນະປະຈຳພັກແຂວງຄັ້ງວັນທີ 14 / 03/2017.
- ອີງຕາມ: ບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບວຽກງານດັບສົມໂຮງງານຄັ້ງວັນທີ 23 / 03 / 2017.

ເຈົ້າແຂວງ, ແຂວງຊຽງຂວາງຕົກລົງ:

ມາດຕາ 1 : ວ່າດ້ວຍການແກ້ໄຂ ແລະ ດັດສົມໂຮງງານປຸງແຕ່ງໄມ້ ແລະ ໂຮງເຟີນີເຈີ່.

ກ. ກ່ຽວກັບໂຮງງານປຸງແຕ່ງໄມ້

1.) ໂຮງງານປຸງແຕ່ງໄມ້ ທີ່ເຄື່ອນໄຫວໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ແມ່ນໃຫ້ຢຸດເຊົາດຳເນີນກິດຈະການ ແລະ ຮື້ຖອນເຄື່ອງຈັກທັງໝົດ.

2. ໂຮງງານປຸງແຕ່ງໄມ້ທີ່ມີເອກະສານຈາກຂະແໜງການທີ່ກ່ຽວຂ້ອງ ແຕ່ບໍ່ໄດ້ເຄື່ອນໄຫວກິດຈະ ການຂອງຕົນ ແມ່ນໃຫ້ຢຸດເຊົາດຳເນີນກິດຈະການ ແລະ ຮື້ຖອນເຄື່ອງຈັກທັງໝົດ.

3.) ໂຮງງານປຸງແຕ່ງໄມ້ທີ່ເຄື່ອນໄຫວໂດຍມີເອກະສານຈາກຂະແໜງການທີ່ກ່ຽວຂ້ອງ ແລະ ຍັງເຄື່ອນໄຫວກິດຈະການຂອງຕົນຢູ່ ແຕ່ຍັງບາງສ່ວນທີ່ຍັງບໍ່ໄດ້ມາດຖານນັ້ນ ໃຫ້ຮີບຮ້ອນປັບປຸງຄືນ ສ່ວນທີ່ບໍ່ໄດ້ມາດຖານ.

4.) ສຳລັບໂຮງງານປຸງແຕ່ງໄມ້ ທີ່ເຄື່ອນໄຫວໂດຍບໍ່ມີເອກະສານຈາກຂະແໜງ ການທີ່ກ່ຽວຂ້ອງ ແມ່ນໃຫ້ສັງລວມແລ້ວລະອຽດແລ້ວ ສະເໜີອອກຂໍ້ຕົກລົງລົບລ້າງຕາມລະບຽບການ ພ້ອມທັງຮື້ຖອນເຄື່ອງຈັກທັງໝົດອອກຈາກສະຖານທີ່ດັ່ງກ່າວ.

5.) ບັນດາໂຮງງານປຸງແຕ່ງໄມ້ ທີ່ຕັ້ງຢູ່ເມືອງໝອກເຂດຄັງວຽງ, ທົ່ງເປົ້ ນອນຢູ່ໃນເຂດປ່າສະຫງວນ ແລະ ນອກປ່າສະຫງວນ ແມ່ນໃຫ້ຍົກຍ້າຍ ມາຕັ້ງຢູ່ເຂດອຸດສາຫະກຳຂອງແຂວງທີ່ໄດ້ກຳນົດໄວ້, ສຳລັບໂຮງງານໃດທີ່ບໍ່ສາມາດຍົກຍ້າຍມາຕັ້ງຢູ່ເຂດ ອຸດສາຫະກຳຂອງແຂວງ ແມ່ນໃຫ້ຍົກເລີກການດຳເນີນກິດຈະການໂຮງງານ, ພ້ອມທັງຮື້ຖອນເຄື່ອງຈັກອອກທັງໝົດ.

ຂ. ກ່ຽວກັບໂຮງງານເຟີນີເຈີທຸກຂະໜາດ.

1.) ໂຮງງານເຟີນີເຈີທຸກຂະໜາດ ທີ່ເຄື່ອນໄຫວໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງ ການທີ່ກ່ຽວຂ້ອງ ແມ່ນໃຫ້ຢຸດເຊົາດຳເນີນກິດຈະການ ແລະ ຮື້ຖອນເຄື່ອງຈັກທັງໝົດ.

2.)ໂຮງງານເຟີນີເຈີ ແລະ ທຸລະກິດໄມ້ແບບຄອບຄົວເປັນຕົ້ນແມ່ນຢູ່ບ່ອນຫ່າງໄກຊອກຫຼີກທີ່ເຮັດການ ຜະລິດເຊັ່ນ: ບານ ປະຕູ, ວົງກົບ ແລະ ອື່ນໆ ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມລະບຽບແລ້ວໃຫ້ສືບຕໍ່ ຜະລິດ ແລະ ປັບປຸງໃຫ້ຖືກ ຕ້ອງຕາມລະບຽບການ ໂດຍສ້າງຕັ້ງເປັນສະມາຄົມ, ມີລະບຽບຄຸ້ມຄອງທີ່ ເຂັ້ມງວດ, ສ່ວນວັດຖຸດິບທີ່ນຳເຂົ້າມາແມ່ນ ໃຫ້ນຳໃຊ້ໄມ້ຈາກໂຮງງານປຸງແຕ່ງໄມ້.

ມາດຕາ 2 : **ການຄຸ້ມຄອງ, ກວດກາ ແລະ ການຈັດຕັ້ງປະຕິບັດ.**

1.) ຫ້າມບໍ່ໃຫ້ຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງອອກອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະ ການໂຮງງານປຸງແຕ່ງໄມ້,ເຟີນີເຈີ ແລະ ທຸລະກິດໄມ້ແບບຄອບຄົວຕື່ມອີກ.

2.) ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ເປັນເຈົ້າການໃນການຕິດຕາມ, ກວດກາບັນດາໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ້, ຖ້າ ພົບເຫັນ ທຸກກໍລະນີ ຂອງການລະເມີດແມ່ນໃຫ້ດຳເນີນຕາມລະບຽບກົດໝາຍຢ່າງເຂັ້ມງວດ ແລະ ໃຫ້ ປະຕິບັດຕາມຄວາມຜິດທີ່ແບ່ງຂັ້ນຄຸ້ມຄອງກັນ ລະຫວ່າງ ແຂວງ ແລະ ເມືອງ.

3.) ມອບໃຫ້ ບັນດາ ທ່ານ ເຈົ້າເມືອງພາຍໃນແຂວງ ຊີ້ນຳຂະແໜງການທີ່ກ່ຽວຂ້ອງຂອງເມືອງ ກວດກາລະອຽດບັນດາໂຮງງານເຟີນີເຈີ່ແລ້ວ ລາຍງານພະແນກອຸດສາຫະກຳ ແລະ ການຄ້າແຂວງ, ອັນ ໃດຂັ້ນເມືອງອະນຸຍາດ, ອັນໃດຂັ້ນແຂວງອະນຸຍາດ ເພື່ອໃຫ້ຈະແຈ້ງໃນການຄຸ້ມຄອງ, ດັດສົມ ແລະ ແກ້ໄຂໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ການແບ່ງຂັ້ນຄຸ້ມຄອງ.

4.) ແຫຼ່ງວັດຖຸດິບແມ່ນຕ້ອງເອົາມາຈາກການອະນຸຍາດທີ່ຖືກຕ້ອງຈຶ່ງສາມາດນຳມາປ້ອນເຂົ້າໂຮງງານ ປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີໄດ້.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ຈັດຕັ້ງປະຕິບັດໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ **ເຈົ້າແຂວງ**

ດຣ.ຄຳປາວ
Dr. Khampao

**ບ່ອນສົ່ງ:**

- ສຳເນົາຫ້ອງວາການ 1 ສະບັບ.
- ພະແນກອຸດສາຫະກຳ-ການຄ້າ 1 ສະບັບ.
- ພະແນກກະສິກຳປ່າໄມ້ແຂວງ 1 ສະບັບ.
- ບັນດາເມືອງ 1 ສະບັບ